**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 56 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 08/07/22

# ມະຕິ
# ກອງປະຊຸມສະພາແຫ່ງຊາດ
# ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022

- ອີງຕາມ ລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປັບປຸງ ປີ 2015 ມາດຕາ 53 ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ;
- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ປີ 2020 ມາດຕາ 60 ກ່ຽວກັບກອງປະຊຸມສະໄໝສາມັນ ປະຈຳ 6 ເດືອນຕົ້ນປີຂອງສະພາແຫ່ງຊາດ;
- ອີງຕາມ ບົດລາຍງານຂອງລັດຖະບານ ກ່ຽວກັບ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ສະບັບເລກທີ 1970/ກງ, ລົງວັນທີ 1 ກໍລະກົດ 2022;
- ອີງຕາມ ບົດລາຍງານຂອງ ລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ລົງວັນທີ 13 ມິຖຸນາ 2022.

ຜ່ານການຮັບຟັງການລາຍງານຂອງລັດຖະບານ, ການຕິດຕາມກວດກາ ແລະ ການຄົ້ນຄວ້າປະກອບ ຄຳຄິດຄຳເຫັນຂອງກອງປະຊຸມສະພາແຫ່ງຊາດຢ່າງກ້ວາງຂວາງ ແລະ ເລິກເຊິ່ງ ໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX,

## ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນ ຕົ້ນປີ 2022**

ກອງປະຊຸມ ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ 2022 ແລະ ຊົມເຊີຍ ລັດຖະບານ ທີ່ໄດ້ມີຄວາມພະຍາຍາມສູ້ຊົນຈັດຕັ້ງປະຕິບັດ ມະຕິສະພາແຫ່ງຊາດ ກ່ຽວກັບ ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈຳປີ 2022, ຊຶ່ງໄດ້ມີຜົນສຳເລັດໃນຫຼາຍດ້ານ.

ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນ ຕົ້ນປີ 2022 ມີຜົນສຳເລັດທີ່ພົ້ນເດັ່ນ ດັ່ງນີ້:

**1. ຜົນສຳເລັດການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນ ຕົ້ນປີ 2022**

1) ລາຍຮັບທັງໝົດປະຕິບັດໄດ້ 13.696 ຕື້ກີບ ເທົ່າກັບ 43,35% ຂອງແຜນການປີ (ມະຕິສະພາແຫ່ງຊາດ 31.593 ຕື້ກີບ), ໃນນັ້ນ:
   - ລາຍຮັບພາຍໃນ ປະຕິບັດໄດ້ 12.640 ຕື້ກີບ ເທົ່າກັບ 43,64% ຂອງແຜນການປີ (ມະຕິສະພາແຫ່ງຊາດ 28.963 ຕື້ກີບ), ໃນນັ້ນ:
     + ລາຍຮັບພາສີ ແລະ ສ່ວຍສາອາກອນ ປະຕິບັດໄດ້ 11.589 ຕື້ກີບ ເທົ່າກັບ 45,35% ຂອງແຜນການປີ (25.554 ຕື້ກີບ);
     + ລາຍຮັບບໍ່ແມ່ນພາສີ ແລະ ສ່ວຍສາອາກອນ ປະຕິບັດໄດ້ 1.051 ຕື້ກີບ ເທົ່າກັບ 30,83% ຂອງແຜນການປີ (3.408 ຕື້ກີບ).
   - ລາຍຮັບຈາກການຊ່ວຍເຫຼືອລ້າ ປະຕິບັດໄດ້ 1.055 ຕື້ກີບ ເທົ່າກັບ 42,90% ຂອງແຜນການປີ (ມະຕິສະພາແຫ່ງຊາດ 2.460 ຕື້ກີບ).

2) ລາຍຈ່າຍທັງໝົດ ປະຕິບັດໄດ້ 12.276 ຕື້ກີບ ເທົ່າກັບ 35,39% ຂອງແຜນການປີ (ມະຕິສະພາແຫ່ງຊາດ 34.691 ຕື້ກີບ), ໃນນັ້ນ:
   - ລາຍຈ່າຍບໍລິຫານປົກກະຕິ ປະຕິບັດໄດ້ 9.411 ຕື້ກີບ ເທົ່າກັບ 39,23% ຂອງແຜນການປີ (ມະຕິສະພາແຫ່ງຊາດ 23.991 ຕື້ກີບ);
   - ລາຍຈ່າຍລົງທຶນ ປະຕິບັດໄດ້ 2.865 ຕື້ກີບ ເທົ່າກັບ 26,77% ຂອງແຜນການປີ (ມະຕິສະພາແຫ່ງ ຊາດ 10.700 ຕື້ກີບ).

3) ການດຸນດ່ຽງງົບປະມານ: ອີງຕາມຕົວເລກລາຍຮັບ ແລະ ລາຍຈ່າຍ ຂ້າງເທິງ ການດຸນດ່ຽງງົບປະມານມີລາຍຮັບເກີນລາຍຈ່າຍ ປະມານ 1.420 ຕື້ກີບ, (ມະຕິສະພາແຫ່ງຊາດ ຂາດດຸນບໍ່ເກີນ 3.098 ຕື້ກີບ) ເຫັນວ່າ ຍັງສາມາດນຳໃຊ້ແຫຼ່ງລາຍຮັບສ່ວນທີ່ເກີນດັ່ງກ່າວດຸນດ່ຽງແຜນລາຍຈ່າຍ;

4) ແຫຼ່ງທຶນເພື່ອມາດຸນດ່ຽງງົບປະມານ ປະຕິບັດໄດ້ 4.437 ຕື້ກີບ ເທົ່າກັບ 22,19% ຂອງແຜນການປີ (ມະຕິສະພາແຫ່ງຊາດ 19.998 ຕື້ກີບ), ໃນນັ້ນ:
   - ແຫຼ່ງທຶນຈາກຕ່າງປະເທດ ປະຕິບັດໄດ້ 3.063 ຕື້ກີບ ເທົ່າກັບ 23,43% ຂອງແຜນການປີ (ມະຕິສະພາແຫ່ງຊາດ 13.072 ຕື້ກີບ);
   - ແຫຼ່ງທຶນພາຍໃນ ປະຕິບັດໄດ້ 1.374 ຕື້ກີບ ເທົ່າກັບ 19,83% ຂອງແຜນການປີ (ມະຕິສະພາ ແຫ່ງຊາດ 6.926 ຕື້ກີບ).

5) ການຊຳລະໜີ້ສິນສາທາລະນະ:
   - ຊຳລະໜີ້ສິນພາຍໃນ ປະຕິບັດໄດ້ 1.619 ຕື້ກີບ ເທົ່າກັບ 31,74% ຂອງແຜນການປີ (ມະຕິສະ ພາແຫ່ງຊາດ 5.100 ຕື້ກີບ);
   - ຊຳລະໜີ້ສິນຕ່າງປະເທດ ປະຕິບັດໄດ້ 2.025 ຕື້ກີບ (137,90 ລ້ານໂດລາສະຫະລັດ, ອັດຕາແລກປ່ຽນ 14.686 ກີບ/ໂດລາສະຫະລັດ) ເທົ່າກັບ 17,16% ຂອງແຜນການປີ (ມະຕິສະພາແຫ່ງຊາດ 11.800 ຕື້ກີບ).

**2. ການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນ ຕົ້ນປີ 2022**

- ປະລິມານເງິນ M2 ຂະຫຍາຍຕົວຢູ່ໃນລະດັບ 13,31% ຂອງໄລຍະດຽວກັນຂອງປີຜ່ານມາ (ມະຕິສະພາແຫ່ງຊາດ ບໍ່ເກີນ 22%), ຖ້າລວມປັດໄຈການປ່ຽນແປງອັດຕາແລກປ່ຽນແມ່ນຂະຫຍາຍຕົວ 42,87% ທຽບໃສ່ໄລຍະດຽວຂອງປີຜ່ານມາ;
- ອັດຕາແລກປ່ຽນ ເງິນກີບ ທຽບເງິນ ໂດລາສະຫະລັດ ອ່ອນຄ່າ 12,12% ແລະ ທຽບເງິນບາດ ອ່ອນຄ່າ 12,66% (ມະຕິສະພາແຫ່ງຊາດ ±5%), ອັດຕາແລກປ່ຽນຢູ່ທະນາຄານ ແລະ ນອກລະບົບທະນາຄານ ສຳລັບເງິນກີບທຽບເງິນໂດລາສະຫະລັດ ສະເລ່ຍແຕກໂຕນ 10,81%, ເງິນກີບທຽບເງິນບາດ ສະເລ່ຍແຕກໂຕນ 3,44%;
- ອັດຕາເງິນເຟີ້ ສະເລ່ຍໃນລະດັບ 11,4% (ມະຕິສະພາແຫ່ງຊາດ 5%);

- ຄັງສຳຮອງເງິນຕາຕ່າງປະເທດ ກຸ້ມການນຳເຂົ້າ 3,63 ເດືອນ (ມະຕິສະພາແຫ່ງຊາດ ບໍ່ໃຫ້ຫຼຸດ 3 ເດືອນ);
- ຍອດເຫຼືອເງິນຝາກຂອງທະນາຄານທຸລະກິດ ກວມເອົາ 85,73% ຂອງ GDP (ມະຕິສະພາແຫ່ງຊາດ 70% ຂອງ GDP ໃນທ້າຍປີ 2022);
- ຍອດເຫຼືອສິນເຊື່ອຂອງຂະແໜງການທະນາຄານ ກວມເອົາ 59,4% ຂອງ GDP (ມະຕິສະພາແຫ່ງຊາດ 50% ຂອງ GDP ໃນທ້າຍປີ 2022);
- ອັດຕາສ່ວນໜີ້ສິນບໍ່ເກີດດອກອອກຜົນ NPLs ຢູ່ໃນລະດັບ 2,22% (ມະຕິສະພາແຫ່ງຊາດ ບໍ່ເກີນ 3%).

ກອງປະຊຸມເຫັນດີໂດຍພື້ນຖານຕໍ່ການຕີລາຄາສະພາບຄວາມຫຍຸ້ງຍາກ ແລະ ຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ 2022 ຕາມການລາຍງານ ຂອງ ລັດຖະບານ.

ກອງປະຊຸມສະເໜີໃຫ້ລັດຖະບານເອົາໃຈໃສ່ສືບຕໍ່ແກ້ໄຂຂໍ້ຄົງຄ້າງ ແລະ ພິຈາລະນາຂໍ້ສະເໜີ ແລະ ຄຳຄິດຄຳເຫັນຂອງກອງປະຊຸມເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຂະແໜງງົບປະມານ ແລະ ເງິນຕາ ຫຼາຍຂຶ້ນຕື່ມ.

**ມາດຕາ 2 ຮັບຮອງເອົາທິດທາງ ແຜນງົບປະມານແຫ່ງລັດ 6 ເດືອນທ້າຍປີ 2022**

ກອງປະຊຸມເຫັນດີຮັບຮອງເອົາທິດທາງແຜນງົບປະມານແຫ່ງລັດ 6 ເດືອນທ້າຍປີ 2022 ຕາມການສະເໜີຂອງລັດຖະບານ.

ເພື່ອຮັບປະກັນ ການຈັດຕັ້ງປະຕິບັດທິດທາງແຜນການດັ່ງກ່າວໃຫ້ບັນລຸຕາມແຜນ, ກອງປະຊຸມສະເໜີລັດຖະບານ ເອົາໃຈໃສ່ປະຕິບັດ ດັ່ງນີ້:

1. ຕໍ່ກັບຄາດໝາຍແຜນງົບປະມານ: ກອງປະຊຸມສະເໜີໃຫ້ ລັດຖະບານ ສູ້ຊົນຈັດຕັ້ງປະຕິບັດຄາດໝາຍງົບປະມານທີ່ໄດ້ກຳນົດໃນ ມະຕິສະພາແຫ່ງຊາດ ວ່າດ້ວຍແຜນງົບປະມານແຫ່ງລັດ ປະຈຳປີ 2022 ສະບັບເລກທີ 42/ສພຊ, ລົງວັນທີ 17/11/2021 ໃຫ້ບັນລຸຕາມແຜນ;
2. ຕໍ່ກັບມາດຕະການຈັດຕັ້ງປະຕິບັດ: ກອງປະຊຸມເຫັນດີຮັບຮອງເອົາ 16 ມາດຕະການ ຂອງແຜນງົບປະມານແຫ່ງລັດ 6 ເດືອນທ້າຍປີ 2022 ຕາມການສະເໜີຂອງລັດຖະບານ.

ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນດັ່ງກ່າວ, ກອງປະຊຸມສະເໜີ ລັດຖະບານ ເອົາໃຈໃສ່ປະຕິບັດມາດຕະການເພີ່ມເຕີມ ດັ່ງນີ້:

1) ເອົາໃຈໃສ່ປະຕິບັດມາດຕະການເກັບລາຍຮັບໃຫ້ເຂັ້ມງວດດ້ວຍການອັດຊ່ອງຫວ່າງການຮົ່ວໄຫຼ, ທັນເປັນທັນສະໄໝການເກັບລາຍຮັບ ເພື່ອຍົກສູງປະສິດທິພາບການເກັບລາຍຮັບ, ມີຄວາມໂປ່ງໃສ, ເອົາໃຈໃສ່ປະຕິບັດການເກັບລາຍຮັບຈາກຜົນກວດສອບ ຂອງອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ ໜີ້ຕ້ອງຮັບທີ່ ລັດຖະບານ ໄດ້ປ່ອຍກູ້ ແລະ ຄ້ຳປະກັນໃຫ້ບັນດາລັດວິສາຫະກິດ ແລະ ວິສາຫະກິດເອກະຊົນໃນໄລຍະຜ່ານມາ ຕາມຂໍ້ ຕົກລົງເລກທີ 01/ສພບທ.ກທຫລ, ລົງວັນທີ 15 ພະຈິກ 2018 ກ່ຽວກັບ ການເກັບກູ້ໜີ້ສິນເງິນກູ້ທີ່ຕິດ ພັນກັບໂຄງການບຸລິມະສິດຂອງລັດຖະບານໃຫ້ຄົບຖ້ວນ ແລະ ລາຍງານ ຄະນະປະຈຳສະພາແຫ່ງຊາດ ກ່ອນ ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແນ່ໃສ່ການເກັບລາຍຮັບໃຫ້ບັນລຸຕາມແຜນການປີ (ມະຕິສະພາແຫ່ງຊາດ 16,44% ຂອງ GDP) ແລະ ຮັບປະກັນບໍ່ໃຫ້ງົບປະມານຂອງລັດຕົກເຮ່ຍເສຍຫາຍ;
2) ເອົາໃຈໃສ່ປະຕິບັດແຜນລາຍຈ່າຍງົບປະມານປະຈຳປີ ໃຫ້ໄປຕາມແຜນການ ໂດຍສະເພາະ ລາຍຈ່າຍງົບປະມານລົງທຶນຂອງລັດ ປີ 2022, ການອ່ວຍໜີ້ 3 ແຈ ແລະ ການອອກພັນທະບັດ, ການຊຳລະຕົ້ນທຶນ ແລະ ດອກເບ້ຍເງິນກູ້ຢືມຕ່າງປະເທດ; ການສ້າງແຜນຊຳລະໜີ້ສິນໄລຍະສັ້ນ ແລະ ໄລຍະກາງດ້ວຍການ ກຳນົດແຫຼ່ງຊຳລະ, ການປັບໂຄງສ້າງໜີ້ ແລະ ການກຳນົດໄລຍະເວລາໜີ້ສິນທີ່ຈະແຈ້ງ, ການປະຕິບັດມາດ ຕະການປະຢັດຕາມ ດຳລັດວ່າດ້ວຍລົດຂອງລັດ ສະບັບເລກທີ 599/ລບ, ລົງວັນທີ 29/9/2021 ໃຫ້ໄດ້ທັນເວລາຕາມທີ່ໄດ້ກຳນົດ ແລະ ຄົບຖ້ວນຕາມແຜນ;
3) ສ້າງແຜນການ ແລະ ກຳນົດມາດຕະການຈະແຈ້ງກ່ຽວກັບການກຳນົດແຫຼ່ງດຸນດ່ຽງງົບປະມານ ແລະ ການຊຳລະຕົ້ນທຶນຕ່າງປະເທດ ໃຫ້ສາມາດປະຕິບັດໄດ້ຕາມແຜນການ ໂດຍສະເພາະ ການເບີກຈ່າຍງົບປະມານໂຄງການລົງທຶນຂອງລັດ ແລະ ການຊຳລະໜີ້ສິນຕ່າງປະເທດໃຫ້ໄປຕາມເວລາທີ່ໄດ້ກຳນົດ;

4) ເອົາໃຈໃສ່ຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດໃຫ້ສອດຄ່ອງກັບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຢ່າງເຂັ້ມງວດ ແລະ ມີຜົນສັກສິດ ດ້ວຍການປະຕິບັດຕາມຫຼັກການ ຂອງອາລະແຫ່ງຊາດ ຄື: ເດັດຂາດ, ໂປ່ງໃສ ແລະ ເປັນມືອາຊີບ;

5) ເອົາໃຈໃສ່ສັງລວມບັນຊີໜີ້ຕ້ອງຮັບ ທີ່ລັດຖະບານໄດ້ປ່ອຍກູ້ ແລະ ຄ້ຳປະກັນໃຫ້ແກ່ລັດວິສາຫະກິດ ແລະ ວິສາຫະກິດເອກະຊົນ ແລະ ໜີ້ຕ້ອງສົ່ງທີ່ລັດຖະບານ ຕ້ອງຊຳລະຕາມກົດໝາຍ ແລະ ສັນຍາ ເປັນຕົ້ນ ໜີ້ສິນຕ່າງປະເທດ ແລະ ໜີ້ສິນໂຄງການລົງທຶນຂອງລັດ ໃນໄລຍະຜ່ານມາ, ພ້ອມສ້າງແຜນການຊຳລະໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ໃຫ້ຈະແຈ້ງແລ້ວລາຍງານ ຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 3 ຮັບຮອງເອົາທິດທາງ ແຜນເງິນຕາ 6 ເດືອນທ້າຍປີ 2022**

ກອງປະຊຸມເຫັນດີຮັບຮອງເອົາທິດທາງ ແຜນເງິນຕາ 6 ເດືອນທ້າຍປີ 2022 ຕາມການລາຍງານ ຂອງລັດຖະບານ.

ເພື່ອຮັບປະກັນ ການຈັດຕັ້ງປະຕິບັດທິດທາງແຜນການດັ່ງກ່າວ ໃຫ້ບັນລຸຕາມແຜນ, ກອງປະຊຸມສະເໜີລັດຖະບານ ເອົາໃຈໃສ່ປະຕິບັດ ດັ່ງນີ້:

1. ຕໍ່ກັບຄາດໝາຍສູ້ຊົນ:

ກອງປະຊຸມສະເໜີໃຫ້ລັດຖະບານ ສູ້ຊົນຈັດຕັ້ງປະຕິບັດຄາດໝາຍແຜນເງິນຕາ ປະຈຳປີ 2022 ຕາມທີ່ໄດ້ກຳນົດໃນມະຕິສະພາແຫ່ງຊາດ;

2. ຕໍ່ກັບມາດຕະການຈັດຕັ້ງປະຕິບັດ:

ກອງປະຊຸມ ສະເໜີໃຫ້ລັດຖະບານເອົາໃຈໃສ່ປະຕິບັດບາງມາດຕະການເພີ່ມຕື່ມ ດັ່ງນີ້:

1) ເອົາໃຈໃສ່ຄຸ້ມຄອງ ແລະ ນຳໃຊ້ປະລິມານເງິນ M2 ເພື່ອຕອບສະໜອງຄວາມຕ້ອງການພັດທະນາເສດຖະກິດ-ສັງຄົມໃຫ້ມີຄວາມກົມກຽວ ແລະ ມີຄວາມສົມດຸນໃນລະດັບມະຫາພາກ ໂດຍສຸມໃສ່ການຄົ້ນຄວ້ານະໂຍບາຍສິນເຊື່ອ ເພື່ອສົ່ງເສີມ ແລະ ຕອບສະໜອງໃຫ້ແກ່ໂຄງການລົງທຶນພັດທະນາເສດຖະກິດ-ສັງຄົມ ແລະ ທຸລະກິດພາຍໃນໃຫ້ມີການຂະ ຫຍາຍຕົວ, ພ້ອມທັງເອົາໃຈໃສ່ຄົ້ນຄວ້າມາດຕະການຄຸ້ມຄອງລວມທັງຕ້ານ ແລະ ສະກັດກັ້ນເງິນເຟີ້ ແລະ ການເຄື່ອນເໜັງອັດຕາແລກປ່ຽນຄ່າຂອງເງິນກີບ ທຽບກັບເງິນຕາສະ ກຸນຫຼັກ (ໂດລາສະຫາລັດ) ໃຫ້ມີສະຖຽນລະພາບ ແລະ ມີຄວາມໝັ້ນທ່ຽງກັບຄືນສູ່ສະພາບປົກກະຕິໂດຍໄວ;

2) ເອົາໃຈໃສ່ຊີ້ນຳຂະແໜງການກ່ຽວຂ້ອງຂອງລັດຖະບານ ປະສານສົມທົບກັນຢ່າງກົມກຽວ ເປັນຕົ້ນ ກະຊວງການເງິນ, ທະນາຄານແຫ່ງ ສປປ ລາວ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງໂຍທາທິການ ແລະ ຂົນ ສົ່ງ, ກະຊວງກະສິກຳ ແລະ ປ່າໄມ້ ຄົ້ນຄວ້າກົນໄກ ແລະ ມາດຕະການຄຸ້ມຄອງລາຄາສິນຄ້າຍຸດທະສາດ ແລະ ສິນຄ້າທີ່ຈຳເປັນສຳລັບຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ມີສະຖຽນລະພາບເພື່ອບໍ່ໃຫ້ອັດຕາເງິນ ເຟີ້ເພີ່ມຂຶ້ນສູງ;

3) ເອົາໃຈໃສ່ຄຸ້ມຄອງອັດຕາແລກປ່ຽນ ດ້ວຍການປະຕິບັດກົດໝາຍວ່າດ້ວຍຄຸ້ມຄອງເງິນຕາຕ່າງປະເທດໃຫ້ເຂັ້ມງວດ ເປັນຕົ້ນ:
   - ການຊຳລະສະສາງພາຍໃນດ້ວຍສະກຸນເງິນກີບ;
   - ການຄຸ້ມຄອງລະບອບອັດຕາແລກປ່ຽນພາຍໃນ ແລະ ນອກລະບົບທະນາຄານ ບໍ່ໃຫ້ມີຄວາມແຕກໂຕນກັນຫຼາຍ;
   - ຄຸ້ມຄອງກະແສເງິນຕາ ເຂົ້າ-ອອກ ເປັນຕົ້ນ ການນຳເຂົ້າເງິນຕາຕົວຈິງຈາກການສົ່ງອອກ ແລະ ການລາຍງານຂໍ້ມູນສະຖິຕິເງິນຕາ ທີ່ໄດ້ຊຳລະການນຳເຂົ້າຕົວຈິງ ໃຫ້ຄົບຖ້ວນ ແລະ ສອດຄ່ອງຕາມທີ່ໄດ້ກຳນົດໃນກົດໝາຍ.

4) ເອົາໃຈໃສ່ຄົ້ນຄວ້າ ແຫຼ່ງເງິນຕາຕ່າງປະເທດ ແລະ ວິທີການຊຳລະເພື່ອຮັບປະກັນການສະໜອງເງິນຕາຕ່າງປະເທດໃຫ້ແກ່ການນຳເຂົ້ານ້ຳມັນເຊື້ອໄຟ ແລະ ສິນຄ້າທີ່ຈຳເປັນສຳລັບຊີວິດການເປັນຢູ່ປະຈຳວັນຂອງປະຊາຊົນໃຫ້ພຽງພໍກັບຄວາມຕ້ອງການ;

5) ເອົາໃຈໃສ່ ປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ຕິດພັນກັບວຽກງານຂອງທະນາຄານທີ່ມີແລ້ວໃຫ້ເຂັ້ມງວດ ແລະ ມີຜົນສັກສິດ; ຄົ້ນຄວ້າປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ພົວພັນກັບກົດໝາຍວ່າດ້ວຍ ການຄຸ້ມຄອງເງິນຕາຕ່າງປະເທດ ໃຫ້ມີຄວາມສອດຄ່ອງ ເປັນຕົ້ນ ກົດໝາຍວ່າດ້ວຍທະນາຄານທຸລະກິດ ມາດຕາ 37 ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

1. ມອບໃຫ້ ລັດຖະບານຊີ້ນຳບັນດາ ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ ແລະ ລາຍງານຜົນການຈັດຕັ້ງປະຕິບັດໃຫ້ແກ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX;
2. ມອບໃຫ້ ຄະນະປະຈຳສະພາແຫ່ງຊາດ, ກຳມາທິການແຜນການ, ການເງິນ ແລະ ການກວດສອບ, ບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ດຳເນີນການຕິດຕາມ-ກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານສະພາແຫ່ງຊາດ

**ປອ ໄຊສົມພອນ ພົມວິຫານ**